ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 1 ສະບັບທີ 2 (ເດືອນ ທັນວາ 2025)
ໜ້າ 91 - 99
Lao Journal of Sustainable Teacher Education SALAVAN Teacher Training College, Volume 1 No.2 (December, 2025) Page 91 – 99

ບົດຄວາມວິໄຈ
(Research Article)

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ສຶກສາພຶດຕິກຳການຮຽນພາສາອັງກິດເປັນພາສາທີ 2 ຂອງນັກສຶກສາ ພາກວິຊາພາສາອັງກິດ ຊັ້ນປີທີ I-III, ຄະນະພາສາ ແລະ ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ

# Behavior toward English Language Learning as a Second Language of year I-III Students, Faculty of Linguistics and Humanities, Savannakhet University

ທິດາພອນ ລຽບວິໄຊນະແຫວງ[1], ສອນເພັດ ແກ້ວດວງສະຫວັດ[2], ວານິທອນ ສິດທິໂສ[3], ຈັນທະຈອນ ຂັນທະວົງ[4], ທອງເຕີ ໂລວັນແທັກ[5], ແລະ ລັດດາວອນ ແກ້ວມະນີວົງ[6]
Thidaphone LIEPVISAYNAVANG, Sonephet KEODUANGSAVAHT, Vanithone SOTTHISO, Chanhthachone KHANTHAVONG, Thongter LOWANTACK, & Latdavone Keomanyvong

## ບົດຄັດຫຍໍ້

ການຄົ້ນຄວ້າວິໄຈໃນຄັ້ງນີ້ເປັນການຄົ້ນຄວ້າແບບສຳຫຼວດ ເຊິ່ງມີຈຸດປະສົງ: (1) ເພື່ອວິເຄາະພຶດຕິກຳການຮຽນພາສາອັງກິດຂອງນັກສຶກ, (2) ເພື່ອວັດລະດັບພາສາອັງກິດຂອງນັກສຶກສາ ແລະ (3) ເພື່ອວິເຄາະບັນຫາ ແລະ ທັກສະທີ່ນັກສຶກສາຕ້ອງການຢາກປັບປຸງ ໃນການຮຽນພາສາອັງກິດເປັນພາສາທີ II ຫຼື ພາສາຕ່າງປະເທດ. ກຸ່ມຕົວຢ່າງສຳລັບການວິໄຈໃນຄັ້ງນີ້ ແມ່ນນັກສຶກສາລະດັບປະລິນຍາຕີປີທີ 1-3 ສົກສຶກສາ 2018-2019, ພາກວິຊາພາສາອັງກິດ, ຄະນະພາສາ ແລະ ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ ຈຳນວນ 03 ຊັ້ນຮຽນ ເຊິ່ງມີກຸ່ມປະຊາກອນທັງໝົດ 102 ຄົນ ໂດຍໃຊ້ແບບສອບຖາມ ແລະ ແບບເສັງທົດສອບເພື່ອວັດລະດັບພາສາອັງກິດຂອງ

[1] ພາກວິຊາພາສາອັງກິດ, ຄະນະພາສາ-ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ/ ສປປ ລາວ.
[2] ພາກວິຊາພາສາອັງກິດ, ຄະນະພາສາ-ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ/ ສປປ ລາວ.
[3] ພາກວິຊາໄອທີ, ຄະນະໄອທີ-ຂໍ້ມູນຂ່າວສານ, ມະຫາວິທະຍາໄລສະຫວັນນະເຂດ/ ສປປ ລາວ.
[4] ພາກວິຊາພາສາຫວຽດ, ຄະນະພາສາ-ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ/ ສປປ ລາວ.
[5] ພາກວິຊາພາສາອັງກິດ, ຄະນະພາສາ-ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ/ ສປປ ລາວ.
[6] ຫ້ອງການຄຸ້ມຄອງບໍລິຫານ, ມະຫາວິທະຍາໄລສະຫວັນນະເຂດ/ ສປປ ລາວ.
Corresponding Author: Thidaphone LIEPVISAYNAVANG, Email: L.thidaphone@sku.edu.la, Tel: 77881246

ນັກສຶກສາ ເປັນເຄື່ອງມືໃນການເກັບກຳຂໍ້ມູນ, ສະຖິຕິທີ່ໃຊ້ໃນການວິເຄາະແມ່ນ ຄ່າເປີເຊັນ, ຄ່າສະເລ່ຍ $\bar{X}$ ແລະ ຄ່າປ່ຽງເບນມາດຕະຖານ (SD). ຜົນການວິໄຈສະຫຼຸບໄດ້ວ່າ (1) ນັກສຶກສາມີພຶດຕິກຳການຮຽນພາສາອັງກິດດີ ເຊິ່ງມີຄ່າສະເລ່ຍຢູ່ໃນລະດັດສູງ ຫຼື ປະຕິບັດເລື້ອຍໆ ($\bar{X}$= 3.51), (2) ຈາກການສອບເສັງວັດລະດັບພາສາອັງກິດຂອງນັກສຶກສາ ເຊິ່ງສາມາດສະຫຼຸບໄດ້ວ່າ: ນັກສຶກສາ 50% ແມ່ນມີລະດັບພາສາອັງກິດຢູ່ໃນລະດັບຕ່ຳ ແລະ ບໍ່ຜ່ານເກນການສອບເສັງວັດລະດັບ (ນັກສຶກສາທີ່ສາມາດຜ່ານເກນມີພຽງ 2 - 4% ເທົ່ານັ້ນ, (3) ບັນຫາຫຼັກທີ່ນັກສຶກສາພົບໃນການຮຽນພາສາອັງກິດແມ່ນບັນຫາທາງດ້ານການຟັງ (21%), ຮອງລົງມາແມ່ນບັນຫາດ້ານການເວົ້າ (18%) ແລະ ບັນຫາດ້ານການອອກສຽງ (17%).

ຜົນຂອງການສຶກສາຄົ້ນຄວ້າສະແດງໃຫ້ເຫັນວ່າ ນັກສຶກສາມີພຶດຕະກຳການຮຽນພາສາອັງກິດຢູ່ໃນລະດັບດີ ແຕ່ຜົນການຮຽນຢູ່ໃນລະດັບຕ່ຳ ແລະ ພົບບັນຫາຫຼາຍໃນເວລາຮຽນພາສາອັງກິດ. ເຊິ່ງຂ້າພະເຈົ້າໃນນາມຜູ້ເຮັດການຄົ້ນຄວ້າວິໄຈ ເຫັນວ່າຄະນະພັກ - ຄະນະນຳ, ຜູ້ສ້າງຫຼັກສູດ ແລະ ອາຈານສອນໃນຄະນະພາສາ ແລະ ມະນຸດສາດ ຄວນຈັດກອງປະຊຸມເພື່ອສຶກສາສະພາບບັນຫາທີ່ນັກສຶກສາພົບໃນການຮຽນພາສາອັງກິດຢ່າງຈິງຈັງ ເພື່ອແກ້ໄຂ, ປັບປຸງ ແລະ ພັດທະນາທັກສະພາສາອັງກິດຂອງນັກສຶກສາໃຫ້ດີກວ່າເກົ່າ.

**ຄຳສັບທີ່ສຳຄັນ**: ຄວາມສາມາດທາງດ້ານພາສາອັງກິດ, ພາສາອັງກິດເປັນພາສາທີສອງ, ພຶດຕິກຳການຮຽນ.

## Abstract

English has become the global lingua franca for international communication, education, and professional advancement. This survey research aimed to (1) analyze the English learning behaviors of students, (2) assess their English proficiency levels, and (3) identify the challenges and skills that students wish to improve in learning English as a second language. The sample consisted of 102 undergraduate students (Years 1-3) for the 2018-2019 academic year at the Faculty of Linguistics and Humanities, Savannakhet University. Instruments included a questionnaire on learning behaviors and standardized English proficiency tests. Findings revealed that:

Students reported high levels of learning behaviors (mean = 3.51). However, proficiency test results showed that 50% of students failed to meet the passing criteria, with only 2-4% passing. The primary challenges identified were listening (21%), followed by speaking (18%), and pronunciation (17%). The study suggests that despite positive learning behaviors, actual proficiency remains low. Academic leaders and instructors should urgently address these gaps through curriculum enhancement and improved instructional strategies.

**Keywords:** English as a Second Language, Learning Behavior, English Proficiency.

## ບົດນຳ

ໃນປັດຈຸບັນ, ພາສາອັງກິດແມ່ນພາສາຫຼັກທີ່ໃຊ້ສື່ສານທົ່ວໂລກໃນທຸກຂະແໜງການ ເຊັ່ນ: ເສດຖະກິດ, ການສຶກສາ ແລະ ເທັກໂນໂລຊີ (Diden Benhawan, 2013). ດ້ວຍຄວາມຈຳເປັນນີ້, ພັກ ແລະ ລັດຖະບານລາວ ຈຶ່ງໄດ້ເລັ່ງສົ່ງເສີມການຮຽນ-ການສອນພາສາອັງກິດເຂົ້າໃນຫຼັກສູດແຕ່ຊັ້ນປະຖົມຈົນຮອດມະຫາວິທະຍາໄລ. ມະຫາວິທະຍາໄລສະຫວັນນະເຂດ ກໍແມ່ນສະຖາບັນໜຶ່ງທີ່ຈັດການຮຽນ-ການສອນພາສາອັງກິດມາແຕ່ສົກປີ

2009-2010. ເຖິງຢ່າງໃດກໍຕາມ, ຜົນການປະເມີນໃນປີ 2019 ພົບວ່ານັກສຶກສາຍັງມີຜົນການຮຽນຕໍ່າ ແລະ ສື່ສານບໍ່ໄດ້ດີເທົ່າທີ່ຄວນ (Souksomboun, 2017-2018). ບັນຫາຫຼັກແມ່ນນັກສຶກສາມີພຶດຕິກຳໃນການຮຽນທີ່ບໍ່ເໝາະສົມ, ຂາດການວາງແຜນ, ບໍ່ຈົດບັນທຶກ ແລະ ບໍ່ທົບທວນບົດຮຽນດ້ວຍຕົນເອງ.

ພຶດຕິກຳການຮຽນພາສາຕ່າງປະເທດໝາຍເຖິງການພັດທະນາຄວາມອາດສາມາດ ແລະ ມີຄວາມໝາຍຄືກັນກັບຍຸດທະສາດການຮຽນ (Wenden, 1991). Ellis (1997) ລະບຸວ່າ ຖ້າຜູ້ຮຽນເລືອກໃຊ້ເທັກນິກທີ່ເໝາະສົມຈະຊ່ວຍພັດທະນາທັກສະໃຫ້ດີຂຶ້ນ. ພຶດຕິກຳດັ່ງກ່າວຕ້ອງມີການວາງແຜນ ແລະ ປະຕິບັດຢ່າງສະໝໍ່າສະເໝີ (Wenden, 1987). Omally ແລະ Chamot (1990) ໄດ້ແບ່ງພຶດຕິກຳການຮຽນອອກເປັນ: ພຶດຕິກຳກ່ອນການຮຽນ ແລະ ພຶດຕິກຳໃນເວລາຮຽນ. ນອກຈາກນີ້, Oxford (1996) ແລະ Lee & Oxford (1989) ຍັງເນັ້ນວ່າພຶດຕິກຳທີ່ຫຼາກຫຼາຍ ແລະ ການປັບປຸງຍຸດທະສາດການຮຽນໃຫ້ເໝາະສົມກັບຕົນເອງ ເປັນເຄື່ອງມືສຳຄັນທີ່ຈະຊ່ວຍໃຫ້ຜູ້ຮຽນປະສົບຜົນສຳເລັດໃນພາສາເປົ້າໝາຍໄດ້ງ່າຍຂຶ້ນ.

ທິດສະດີສະຕິປັນຍາ (Piaget, 1972) ເນັ້ນວ່າພຶດຕິກຳຂອງນັກຮຽນສະທ້ອນເຖິງຍຸດທະສາດທາງດ້ານສະຕິປັນຍາສ່ວນບຸກຄົນ ເຊັ່ນ: ການຈັດລະບຽບ ແລະ ການຕິດຕາມຄວາມເຂົ້າໃຈ. ສອດຄ່ອງກັບ Gardner (1985) ທີ່ເນັ້ນວ່າທັດສະນະຄະຕິທາງບວກ ແລະ ແຮງຈູງໃຈມີບົດບາດສຳຄັນໃນການໄດ້ຮັບພາສາທີສອງ. ເຖິງວ່າພາສາອັງກິດຈະເປັນເຄື່ອງມືສຳຄັນສຳລັບການສື່ສານສາກົນ, ແຕ່ພຶດຕິກຳຂອງນັກຮຽນຕໍ່ການຮຽນມັກຈະແຕກຕ່າງກັນ ເຊິ່ງສົ່ງຜົນຕໍ່ຜົນສຳເລັດທາງວິຊາການ. ທີ່ມະຫາວິທະຍາໄລສະຫວັນນະເຂດ, ນັກສຶກສາສະແດງພຶດຕິກຳທີ່ຫຼາກຫຼາຍ ນັບແຕ່ຄວາມກະຕືລືລົ້ນໄປຈົນຮອດຄວາມລັງເລ ແລະ ຄວາມໝັ້ນໃຈຕໍ່າ.

ການກຳນົດປັດໄຈພຶດຕິກຳທີ່ສົ່ງເສີມ ຫຼື ຂັດຂວາງການຮຽນ ຈະຊ່ວຍສະໜັບສະໜູນການປັບປຸງຫຼັກສູດ ແລະ ການປະດິດສ້າງການສອນໃຫ້ມີຄຸນນະພາບ (Diden Benhawan, 2013). ດັ່ງນັ້ນ, ທີມງານຜູ້ວິໄຈຈຶ່ງສົນໃຈສຶກສາພຶດຕິກຳການຮຽນພາສາອັງກິດຂອງນັກສຶກສາປີ I-III ພາກວິຊາພາສາອັງກິດ ເພື່ອວິເຄາະພຶດຕິກຳ, ວັດລະດັບຄວາມຮູ້ ແລະ ວິເຄາະບັນຫາຕົວຈິງທີ່ນັກສຶກສາພົບ . ຜົນການວິໄຈນີ້ຈະຊ່ວຍໃຫ້ນັກສຶກສາຮູ້ຈັກຍຸດທະສາດການຮຽນຂອງຕົນເອງ ແລະ ເປັນແນວທາງໃຫ້ຄະນະວິຊາປັບປຸງການສິດສອນ ເພື່ອເສີມສ້າງຄວາມສາມາດດ້ານການສື່ສານຂອງນັກສຶກສາທັງໃນດ້ານວິຊາການ ແລະ ວິຊາຊີບໃຫ້ມີປະສິດທິພາບ.

## ຈຸດປະສົງ

- ເພື່ອວິເຄາະພຶດຕິກຳການຮຽນພາສາອັງກິດຂອງນັກສຶກສາພາກວິຊາພາສາອັງກິດ, ຄະນະພາສາ ແລະ ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ.
- ເພື່ອວັດລະດັບພາສາອັງກິດຂອງນັກສຶກສາຂອງນັກສຶກສາພາກວິຊາພາສາອັງກິດ, ຄະນະພາສາ ແລະ ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ.
- ເພື່ອວິເຄາະບັນຫາທີ່ນັກສຶກສາພົບໃນເວລາຮຽນພາສາອັງກິດ

## ວິທີການວິໄຈ

ວິໄຈຄັ້ງນີ້ໃຊ້ລະບຽບວິທີວິໄຈ **ແບບສຳຫຼວດ (Survey Research)** ເພື່ອສຶກສາພຶດຕິກຳ ແລະ ລະດັບຄວາມສາມາດທາງດ້ານພາສາອັງກິດຂອງນັກສຶກສາ.

**ຜູ້ເຂົ້າຮ່ວມການວິໄຈ**

- ກຸ່ມຕົວຢ່າງ: ແມ່ນນັກສຶກສາລະດັບປະລິນຍາຕີ ປີທີ 1-3 ສົກສຶກສາ 2018-2019, ພາກວິຊາພາສາອັງກິດ ຄະນະພາສາ ແລະ ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ ຈຳນວນ 102 ຄົນ.
- ວິທີການເລືອກກຸ່ມຕົວຢ່າງ: ຜູ້ວິໄຈໄດ້ກຳນົດເອົານັກສຶກສາທັງໝົດທີ່ຮຽນພາສາອັງກິດໃນສົກຮຽນດັ່ງກ່າວ ເປັນກຸ່ມເປົ້າໝາຍ ເນື່ອງຈາກຈຳນວນປະຊາກອນມີບໍ່ຫຼາຍ.

**ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

1. ແບບສອບຖາມ: ເພື່ອສຳຫຼວດພຶດຕິກຳການຮຽນ ແລະ ບັນຫາທີ່ນັກສຶກສາພົບ. ເຄື່ອງມືນີ້ໄດ້ຜ່ານການກວດສອບຄວາມຖືກຕ້ອງດ້ານເນື້ອໃນຈາກຜູ້ຊ່ຽວຊານ 2 ທ່ານ ແລະ ມີຄ່າຄວາມເຊື່ອໝັ້ນ (alpha-Coefficient) ເທົ່າກັບ 0.95.
2. ແບບເສັງທົດສອບ (Proficiency Test): ໃຊ້ແບບທົດສອບມາດຕະຖານຂອງ European Consortium for the Certificate of Attainment in Modern Languages (ECL). ໃນນີ້, ນັກສຶກສາປີ 1-2 ໃຊ້ລະດັບ A2 ແລະ ປີ 3 ໃຊ້ລະດັບ B1.

**ການເກັບລວບລວມຂໍ້ມູນ (Data Collection)**

- ຜູ້ວິໄຈໄດ້ແຈກຍາຍແບບສອບຖາມໃຫ້ກຸ່ມຕົວຢ່າງໃນລະຫວ່າງວັນທີ 1-9 ທັນວາ 2018 ແລະ ເກັບລວບລວມຄືນດ້ວຍຕົນເອງ.
- ຈັດຕັ້ງການສອບເສັງວັດລະດັບຄວາມສາມາດໃນວັນທີ 12 ທັນວາ 2018 ເພື່ອນຳຜົນມາປຽບທຽບກັບພຶດຕິກຳການຮຽນ.

**ການວິເຄາະຂໍ້ມູນ (Data Analysis)**

- ຂໍ້ມູນທັງໝົດຖືກວິເຄາະດ້ວຍໂປຣແກຣມ Microsoft Excel.
- ສະຖິຕິທີ່ໃຊ້ປະກອບມີ: ຄ່າຄວາມຖີ່ (Frequency), ຄ່າເປີເຊັນ (Percentage), ຄ່າສະເລ່ຍ ($\bar{X}$), ແລະ ຄ່າຜັນປ່ຽນມາດຕະຖານ (S.D).

## ຜົນການວິໄຈ ແລະ ອະພິປາຍຜົນ

### ຜົນການວິໄຈ

**ວິເຄາະພຶດຕິກຳການຮຽນພາສາອັງກິດຂອງນັກສຶກສາ:**

ຈາກການວິເຄາະຂໍ້ມູນ ພົບວ່າພຶດຕິກຳການຮຽນພາສາອັງກິດຂອງນັກສຶກສາໂດຍລວມແມ່ນຢູ່ໃນລະດັດສູງ ຫຼື ປະຕິບັດເລື້ອຍໆ ($\bar{X}$= 3.51), ເມື່ອວິເຄາະແຕ່ລະພຶດຕິກຳ (ດ້ານ 1- 4 ມີຄ່າ $\bar{X}$= 3.77, 3.57, 3.46, ແລະ 3.22 ຕາມລຳດັບ) ພຶດຕິກຳດັ່ງກ່າວໄດ້ແກ່: ພຶດຕິກຳກ່ອນການຮຽນ (ລຳດັບ 1 $\bar{X}$= 3.77), ພຶດຕິກຳການຮຽນດ້ວຍຕົນເອງ (ລຳດັບ 2 $\bar{X}$= 3.57), ພຶດຕິກຳທີ່ປະຕິບັດໃນເວລາຮຽນ (ລຳດັບ 3 $\bar{X}$= 3.46) ແລະ ພຶດຕິກຳທີ່ປະຕິບັດຫຼັງການຮຽນ (ລຳດັບ 4 $\bar{X}$= 3.22)

**ວັດລະດັບຄວາມສາມາດພາສາອັງກິດຂອງນັກສຶກສາຂອງນັກສຶກ:**

ຜົນຂອງການສອບເສັງວັດລະດັບພົບວ່ານັກສຶກສາປີ 1&2 ກວມເຖິງ 29.42% ທີ່ມີຜົນການວັດລະດັບທີ່ຕໍ່າ ແລະ ບໍ່ຜ່ານເກນ (ຢູ່ໃນເກຼດ F-D+). 21.56% ມີຄະແນນການສອບເສັງຢູ່ໃນລະດັບປານກາງ ( ຢູ່ໃນເກຼດ C-C+), ແລະ 27.45% ຂອງນັກສຶກສາທີ່ມີລະດັບການສອບເສັງຢູ່ໃນລະດັບດີ (ຢູ່ໃນເກຼດ B-B+), ແລະ ມີພຽງ 1.96% ເທົ່ານັ້ນທີ່ມີຄະແນນການສອບເສັງໃນລະດັບດີຫຼາຍ (ຢູ່ໃນເກຼດ A). ສໍາລັບຜົນການວັດສະດັບພາສາອັງກິດຂອງນັກສຶກສາປີ 3 ເຫັນວ່າ 43.13% ແມ່ນມີຜົນການວັດລະດັບຢູ່ໃນລະດັບຕໍ່າ ແລະ ບໍ່ຜ່ານເກນ. 54.90% ຂອງນັກສຶກສາມີຜົນການສອບເສັງຢູ່ໃນລະດັບປານກາງຫາດີ ( ຢູ່ໃນເກຼດ C-B+), ແລະ ມີພຽງ 1.96% ເທົ່ານັ້ນທີ່ມີຄະແນນການສອບເສັງໃນລະດັບດີຫຼາຍ (ຢູ່ໃນເກຼດ A).

**ວິເຄາະບັນຫາທີ່ນັກສຶກສາພົບໃນເວລາຮຽນພາສາອັງກິດ**

ຈາກການເກັບກໍາຂໍ້ມູນກ່ຽວກັບບັນຫາທີ່ນັກສຶກສາພົບໃນເວລາຮຽນພາສາອັງກິດສາມາດສະຫຼຸບໄດ້ວ່າ: ບັນຫາຫຼັກທີ່ນັກສຶກສາພົບໃນການຮຽນພາສາອັງກິດແມ່ນບັນຫາທາງດ້ານການຟັງ (21%), ຮອງລົງມາແມ່ນບັນຫາດ້ານການເວົ້າ (18%) ແລະ ນັກສຶກສາມີບັນຫາດ້ານການອອກສຽງ (17%), ບໍສາມາດຈື່ຄໍາສັບໄດ້, ຮູ້ດ້ານຄໍາສັບສະເພາະດ້ານບໍຫຼາຍ (15%), ການແປສໍານວນບໍ່ໄດ້ (9%), ບັນຫາດ້ານການຂຽນ (7%), ບັນຫາດ້ານການອ່ານ (3%), ແລະ ອີກ (5%) ມີບັນຫາດ້ານຫຼັກໄວຍາກອນ ແລະ ບັນຫາອື່ນໆ.

**ອະພິປາຍຜົນ**

**RQ 01:** ນັກສຶກສາມີພຶດຕິກໍາໃນການຮຽນພາສາອັງກິດເປັນແນວໃດ?

ຈາກຜົນການສຶກສາຄົ້ນຄວ້າກ່ຽວກັບພຶດຕິກໍາການຮຽນພາສາອັງກິດເປັນພາສາທີ່ II ຂອງນັກສຶກສາ ສາມາດສະຫຼຸບໄດ້ວ່ານັກສຶກສາມີລະດັບພຶດຕິກໍາການຮຽນຢູ່ໃນລະດັບດີ ເນື່ອງຈາກວ່ານັກສຶກສາມີທັດສະນະຄະຕິທາງບວກຕໍ່ກັບພາສາອັງກິດ. ນອກຈາກຈະບໍ່ຮູ້ສຶກເບື່ອໜ່າຍໃນການຮຽນແລ້ວ ນັກສຶກສາຍັງມີຄວາມກະຕືລືລົ້ນໃນການເຝິກຊ້ອມພາສາອັງກິດໃຫ້ມີຄວາມສໍານານເພື່ອຄວາມສໍາເລັດໃນອານາຄົດ. ເຊິ່ງສອດຄ່ອງກັບຜົນການວິໄຈຂອງ (Naiman et al.1978 & Dornyei, 1996) ພົບວ່ານັກສຶກສາທີ່ປະສົບຜົນສໍາເລັດແມ່ນຜູ້ທີ່ມີທັດສະນະຄະຕິທາງບວກຕໍ່ກັບການຮຽນພາສາອັງກິດໄດ້ດີກວ່າຜູ້ທີ່ມີທັດສະນະຄະຕິທາງລົບ.

**RQ 02:** ການສໍາຫຼວດຜົນການຮຽນພາສາອັງກິດຂອງນັກສຶກສາເປັນແນວໃດ?

ສໍາຫຼວດຜົນການຮຽນຂອງນັກສຶກສາພົບວ່າ ມີລະດັບຄວາມຮູ້ດ້ານພາສາອັງກິດທີ່ຍັງຕໍ່າ ແລະ ບໍ່ຜ່ານເກນເຊິ່ງມີຫຼາຍສາເຫດທີ່ພາໃຫ້ຜົນການຮຽນພາສາອັງກິດຂອງນັກສຶກສາຕໍ່າ ແລະ ບໍ່ຜ່ານເກນເຊັ່ນ: ຫຼັກສູດທີ່ໃຊ້ໃນການຮຽນ-ການສອນບໍ່ເໝາະສົມກັບສະພາບຄວາມເປັນຈິງຂອງສັງຄົມ, ຄູອາຈານທີ່ສອນສ່ວນຫຼາຍມີວຸດທິການສຶກສາຕໍ່າ (ວຸດປະລິນຍາຕີ), ເປັນພະນັກງານໜຸ່ມນ້ອຍ ຍັງຂາດທັກສະ ແລະ ປະສົບການໃນການສອນ, ນັກສຶກສາຍັງມີທັດສະນະຄະຕິທາງລົບ ແລະ ບໍ່ເຫັນຄວາມສໍາຄັນຂອງພາສາອັງກິດ, ນັກສຶກສາຍັງມີວິທີການສຶກສາທີ່ບໍ່ເໝາະສົມ ຫຼື ຂາດການເຝິກຊ້ອມໃນດ້ານຕ່າງໆຈຶ່ງເຮັດໃຫ້ລະດັບພາສາອັງກິດຍັງຕໍ່າ ເຊິ່ງກົງກັບຜົນການວິໄຈຂອງ Watcharajinda (2009) ໄດ້ກ່າວວ່າສາເຫດທີ່ພາໃຫ້ການຮຽນ-ການສອນພາສາອັງກິດບໍ່ໄດ້ຮັບຜົນຕາມເປົ້າໝາຍທີ່ວາງໄວ້ ແມ່ນເນື່ອງມາຈາກຜູ້ຮຽນອາດບໍ່ເຫັນໄດ້ເຖິງຄວາມຈໍາເປັນ ຫຼື ຜົນປະໂຫຍດຂອງການຮຽນພາສາອັງກິດ ແລະ ການຂາດຄວາມພ້ອມດ້ານອຸປະກອນການຮຽນ-ການສອນ, ສະຕິປັນຍາຂອງຜູ້ຮຽນ, ທັດສະນະຄະຕິຕໍ່ການ

ຮຽນ, ແຮງຈູງໃຈໃນການຮຽນ, ຍຸດທະສາດການຮຽນ ແລະ ພຶດຕິກຳໃນການຮຽນ. ປັດໄຈເຫຼົ່ານີ້ສົ່ງຜົນຕໍ່ຜົນສຳເລັດໃນການຮຽນຮູ້ພາສາທີ 2 ຫຼື ພາສາຕ່າງປະເທດ.

ສອດຄ້ອງກັບ ດີເດັ່ນ ເບັນຮາວັນ ໃນປີ 2013 ເຊິ່ງໄດ້ກ່າວໄວ້ວ່າສາເຫດທີ່ພາໃຫ້ນັກສຶກສາບໍ່ປະສົບຜົນສຳເລັດໃນການຮຽນແມ່ນຍ້ອນນັກສຶກສາບໍ່ມີການວາງແຜນທີ່ດີໃນການຮຽນ, ບໍ່ກຽມຕົວກ່ອນເຂົ້າຮຽນ, ບໍ່ທົບທວນບົດຮຽນຄືນຫຼັງຈາກເລີກຮຽນ ແລະ ຂາດການເຝິກຊ້ອມດ້ວຍວິທີການຕ່າງໆເຊັ່ນ: ການເບິ່ງໜັງ-ຟັງເພງ ເປັນພາສາອັງກິດ, ການເຝິກຊ້ອມອອກສຽງ ແລະ ການເຝິກເວົ້າພາສາອັງກິດກັບໝູ່ເພື່ອນ ຫຼື ຕ່າງປະເທດເປັນຕົ້ນ.

ນອກຈາກນີ້ຜົນການວິໄຈໃນຄັ້ງນີ້ຍັງສະແດງໃຫ້ເຫັນວ່າ ນັກສຶກສາສ່ວນໃຫຍ່ມີພຶດຕິກຳການຮຽນທີ່ຍັງບໍ່ທັນເໝາະສົມເທົ່າທີ່ຄວນເຊັ່ນວ່າ: ຍັງບໍ່ທັນທຸ່ມເທ ແລະ ເອົາໃຈໃສ່ໃນການຮຽນ, ມາໂຮງຮຽນປົກກະຕິແຕ່ບໍ່ຕັ້ງໃຈຟັງສິ່ງທີ່ອາຈານສອນ, ບໍ່ກ້າຖາມອາຈານເພື່ອພົບບັນຫາໃນເວລາຮຽນ ແລະ ບໍ່ກ້າສົນທະນາກັບໝູ່ເພື່ອນ ຈຶ່ງເຮັດໃຫ້ຜົນການຮຽນຕໍ່າ ແລະ ບໍ່ຜ່ານເກນ. ເຊິ່ງສອດຄ່ອງກັບຜົນການວິໄຈຂອງ Chang, Chiu & Lee (2000) ທີ່ພົບວ່າພຶດຕິກຳການຮຽນຂອງນັກສຶກສາທີ່ມີຜົນການຮຽນຕໍ່າແມ່ນຍ້ອນການຂາດການນຳໃຊ້ກົນລະຍຸດການຮຽນທີ່ດີ, ຂາດການເຝິກຊ້ອມ ຈຶ່ງເຮັດໃຫ້ບໍ່ສາມາດນຳເອົາຄວາມຮູ້, ຄວາມສາມາດທີ່ໄດ້ຮຽນໄປໝູນໃຊ້ນອກຫ້ອງຮຽນໄດ້. ສອດຄ່ອງກັບຜົນການວິໄຈຂອງ Green & Oxford (1995) ນັກສຶກສາປະສົບຜົນສຳເລັດໃນການຮຽນພາສາທີ່ສອງເນື່ອງຈາກຫຼາຍປັດໄຈເຊັ່ນ: (1) ມີການເຝິກຊ້ອມເລົ່າຄຳສັບ ແລະ ການເຝິກເດົາຄວາມໝາຍຂອງຄຳສັບ, (2) ມີການວາງແຜນການຮຽນທີ່ດີ, (3) ການຕັ້ງໃຈສຶກສາຄົ້ນຄວ້າ, (4) ການສອບຖາມຄຳຖາມໃນເວລາທີ່ມີບັນຫາ ຫຼື ບໍ່ເຂົ້າໃຈກ່ຽວກັບບົດຮຽນ ແລະ (5) ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຮຽນ.

Wu (2008) ສຶກສາພຶດຕິກຳການຮຽນພາສາອັງກິດຂອງນັກສຶກສາລະດັບມະຫາວິທະຍາໄລຈຳນວນ 137 ແຫ່ງໃນປະເທດໄຕ້ຫວັນ. ຜົນຂອງການວິໄຈສະແດງໃຫ້ເຫັນວ່າ ນັກສຶກສາທີ່ມີຄວາມຮູ້ຄວາມສາມາດສູງທາງດ້ານພາສາອັງກິດແມ່ນໃຊ້ວິທີການຮຽນດັ່ງນີ້: (1) ມີແຜນການຮຽນທີ່ດີ, (2) ຕ້ອງມີການເຝິກຊ້ອມກັບເຈົ້າຂອງພາສາເປັນປົກກະຕິ ເພື່ອລົງເລິກທາງດ້ານພາສາ ແລະ ວັດທະນະທຳ.

**RQ 03:** ບັນຫາທີ່ນັກສຶກສາພົບໃນການຮຽນພາສາອັງກິດມີຫຍັງແດ່?

ຈາການສຳຫຼວດພົບວ່ານັກສຶກສາຍັງພົບຫຼາຍບັນຫາໃນການຮຽນພາສາອັງກິດເຊັ່ນ: ດ້ານການຟັງ, ການເວົ້າ, ການອອກສຽງ, ບໍສາມາດຈື່ຄຳສັບໄດ້, ຮູ້ດ້ານຄຳສັບສະເພາະດ້ານບໍຫຼາຍ, ການແປສຳນວນບໍ່ໄດ້, ບັນຫາດ້ານການຂຽນ, ບັນຫາດ້ານການອ່ານ, ແລະ ບັນຫາດ້ານຫຼັກໄວຍາກອນ. ນັກສຶກສາຂາດຄວາມໝັ້ນໃຈໃນໂຕເອງ, ຄວາມຂີ້ອາຍ, ຍ້ານກົວໃນການເວົ້າໃນທີ່ສາທາລະນະ ແລະ ວິຕົກກັງວົນຕໍ່ຄຳວິພາກວິຈານຈາກໝູ່ເພື່ອນ ເຊິ່ງນຳໄປສູ່ການປະລະການຮຽນ ແລະ ອື່ນໆ. ຜົນການສຶກສາໄດ້ສອດຄ່ອງກັບ Sulhair (2025) ທີ່ໄດ້ກ່າວວ່າ: ນັກສຶກສາຂາດຄວາມໝັ້ນໃຈໃນໂຕເອງ, ຄວາມຂີ້ອາຍ, ຍ້ານກົວໃນການເວົ້າໃນທີ່ສາທາລະນະ ແລະ ວິຕົກກັງວົນຕໍ່ຄຳວິພາກວິຈານຈາກໝູ່ເພື່ອນ, ຍ້າຍເວົ້າຜິດ ແລະ ອື່ນໆ.

ຜົນການຄົ້ນຄວ້າຍັງກົງກັບຜົນການວິໄຈຂອງຫຼາຍໆທ່ານທີ່ສຶກສາໃນລັກສະນະດຽວກັນເຊັ່ນ: Horwitz, E. K., Horwitz, M. B., & Cope, J. (1986) ສຶກສາກ່ຽວກັບຄວາມວິຕົກກັງວົນໃນການເວົ້າພາສາອັງກິດ, ຍ້ອນຖືກການປະເມີນໃນທາງລົບຈາກຜູ້ທີ່ເກັ່ງກວ່າຕົນເອງເຮັດໃຫ້ຂາດແຮງຈູງໃຈ. Kholili & Febrianto (2024)

ຄົ້ນພົບວ່າ: ນັກສຶກສາມີຄວາມວິຕົກກັງວົນ, ການຂາດຄວາມໝັ້ນໃຈ, ຂາດແຮງຈູງໃຈ ແມ່ນເປັນໄຈສຳຄັນທີ່ເຮັດໃຫ້ການຮຽນພາສາອັງກິດບໍ່ປະສົບຜົນສຳເລັດ.

## ສະຫຼຸບຜົນ

ການສຶກສາພຶດຕິກຳການຮຽນພາສາອັງກິດຂອງນັກສຶກສາໄດ້ສະທ້ອນໃຫ້ເຫັນເຖິງຄວາມຊັບຊ້ອນຂອງປັດໄຈດ້ານສະຕິປັນຍາ ແລະ ແຮງຈູງໃຈທີ່ມີອິດທິພົນຕໍ່ການຮຽນຮູ້. ຜົນການວິໄຈຊີ້ໃຫ້ເຫັນວ່ານັກສຶກສາທີ່ມີທັດສະນະຄະຕິທາງບວກ ແລະ ແຮງຈູງໃຈພາຍໃນສູງ ມີແນວໂນ້ມທີ່ຈະປະສົບຜົນສຳເລັດດີກວ່າຜູ້ທີ່ມີຄວາມເຊື່ອໝັ້ນຕ່ຳ ຫຼື ມີນິໄສການຮຽນຮູ້ແບບຕັ້ງຮັບ (Passive). ການສຶກສາຍັງຢືນຢັນວ່າ ວິທີການສອນແບບສະໜັບສະໜູນ ແລະ ສະພາບແວດລ້ອມທີ່ເນັ້ນການໂຕ້ຕອບ ມີບົດບາດສຳຄັນໃນການສົ່ງເສີມພຶດຕິກຳການຮຽນທາງບວກ ແລະ ເພີ່ມຄວາມໝັ້ນໃຈໃຫ້ແກ່ຜູ້ຮຽນ.

ສະຫຼຸບລວມແລ້ວ, ການພັດທະນາການຮຽນ-ການສອນພາສາອັງກິດໃຫ້ມີປະສິດທິພາບ ຮຽກຮ້ອງໃຫ້ມີຄວາມສົມດູນລະຫວ່າງການປັບປຸງພຶດຕິກຳ, ການພັດທະນາສະຕິປັນຍາ ແລະ ການສະໜັບສະໜູນດ້ານອາລົມ. ຄູສອນຄວນອອກແບບກິດຈະກຳທີ່ເນັ້ນຜູ້ຮຽນເປັນໃຈກາງ ເພື່ອກະຕຸ້ນການນຳໃຊ້ພາສາໃນສະພາບຕົວຈິງ. ການເຂົ້າໃຈ ແລະ ແກ້ໄຂຮູບແບບພຶດຕິກຳທີ່ຄົ້ນພົບໃນຄັ້ງນີ້ ຈະຊ່ວຍໃຫ້ຄະນະພາສາ ແລະ ມະນຸດສາດ ສາມາດປັບປຸງການສິດສອນ ແລະ ເສີມສ້າງການມີສ່ວນຮ່ວມຂອງນັກສຶກສາໃຫ້ມີຄຸນນະພາບຍິ່ງຂຶ້ນ.

## ຂໍ້ສະເໜີແນະ

### ຂໍ້ສະເໜີແນະຜົນການວິໄຈນຳໄປໃຊ້

- ດ້ານນະໂຍບາຍ ແລະ ຫຼັກສູດ: ຄະນະນຳ ແລະ ຜູ້ສ້າງຫຼັກສູດຄວນຈັດກອງປະຊຸມຢ່າງເປັນທາງການ ເພື່ອທົບທວນເນື້ອໃນຫຼັກສູດ ໂດຍເນັ້ນໜັກໃສ່ການຝຶກຝົນທັກສະການຟັງ, ການເວົ້າ, ແລະ ການອອກສຽງໃຫ້ຫຼາຍຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ.
- **ດ້ານການຈັດການຮຽນ-ການສອນ:** ອາຈານສອນຄວນນຳໃຊ້ວິທີການສອນທີ່ເນັ້ນຜູ້ຮຽນເປັນໃຈກາງ ແລະ ສ້າງສະພາບແວດລ້ອມໃນຫ້ອງຮຽນໃຫ້ມີຄວາມຜ່ອນຄາຍ ເພື່ອຫຼຸດຜ່ອນຄວາມວິຕົກກັງວົນຂອງຜູ້ຮຽນ.

### ຂໍ້ສະເໜີແນະໃນການວິໄຈຄັ້ງຕໍ່ໄປ (Suggestions for Future Research)

- **ການສຶກສາລົງເລິກ:** ຄວນມີການສຶກສາເຖິງສະພາບບັນຫາ ແລະ ຄວາມຕ້ອງການໃນການພັດທະນາທັກສະພາສາອັງກິດ ຂອງນັກສຶກສາທີ່ມີລະດັບຄວາມຮູ້ພາສາອັງກິດຕ່ຳໂດຍສະເພາະ.
- **ການສຶກສາປຽບທຽບ:** ຄວນມີການວິໄຈປຽບທຽບພຶດຕິກຳການຮຽນພາສາອັງກິດ ລະຫວ່າງນັກສຶກສາທີ່ມີຜົນການຮຽນໃນລະດັບດີ ແລະ ລະດັບຕ່ຳ ເພື່ອຫາຕົວແບບ (Model) ການຮຽນຮູ້ທີ່ມີປະສິດທິພາບ.

## ກິດຕິຄຸນ

ຄະນະຜູ້ວິໄຈຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງ ຄະນະນຳມະຫາວິທະຍາໄລສະຫວັນນະເຂດ ແລະ ຄະນະພາສາ ແລະ ມະນຸດສາດ ທີ່ໄດ້ອຳນວຍຄວາມສະດວກ , ພ້ອມດ້ວຍຄູ-ອາຈານ ແລະ ນັກສຶກສາພາກວິຊາ

ພາສາອັງກິດທຸກທ່ານ ທີ່ໄດ້ໃຫ້ການຮ່ວມມືໃນການເກັບກຳຂໍ້ມູນ , ຈິ່ງເຮັດໃຫ້ບົດວິໄຈສະບັບນີ້ສຳເລັດລົງຕາມຈຸດປະສົງທີ່ວາງໄວ້.

## ເອກະສານອ້າງອີງ


Adams, Rebecca. (2006). Language learning strategies in the study abroad context. In M.A. DuFon & E. Churchill (Eds.), Language learners in study abroad contexts (pp.259-288). New York: Multilingual Matters.

A. U. Chamot and L. Kupper. (1989). Learning strategies in foreign language instruction. Foreign Language Annals, 22(1), 13-24.

Alkaff, A. (2013). Students' attitudes and perceptions towards learning English. Arab World English Journal, 4(2), 106-121.

Bowers, E., Fitts, S., Quirk, M., & Woo, J. (2010). Effective strategies for developing academic English: Professional development and teacher practices. Bilingual Research Journal, 33(1), 95-110.

Boyarkina, Svetlana V. (1999). Language learning strategies and proficiency in English as a second language (Master's thesis). California State University, Chico, CA.

Bremner, S. (1999). Language learning strategies and language proficiency: Investigating the relationship in Hong Kong. *Canadian Modern Language Review*, 55(4), 490-514.

Chang, C. P., Chiu, C. K., & Lee, W. Y. (2000). Study on the relationship between learning strategies and language proficiency. *Journal of Chinese Language Teaching*, *1*(2), 101–115.

Diden Benhawan .(2013). Understanding successful and unsuccessful EFL students in Chinese university. The modern language journal, 88(2), 229-224.

Dörnyei, Z. (1996). Motivational Dynamics in Language Learning. *System*, *24*(3), 431–440.

Ellis. (1997). The study of second langue acquisition. Curtin University.

Gardner, R. C. (2014). Behavior and motivation in second language learning. In Bilingualism, multiculturalism, and second language learning (pp. 63–84). Psychology Press.

Green, J. M., & Oxford, R. L. (1995). A closer look at learning strategies, L2 proficiency, and gender. *TESOL Quarterly*, *29*(2), 261–297.

Horwitz, E. K., Horwitz, M. B., & Cope, J. (1986). Foreign language classroom anxiety. *The Modern Language Journal*, *70*(2), 125–132.

Klassen, Jonathan M. (1994). The language learning strategies of freshman English students in Taiwan: A case study (Master's thesis). California State University, Chico, CA.

Kholili, A., & Febrianto, A. R. (2024). Understanding non-English Major's Students' Motivation in Learning English via Photovoices: Insights from Indonesian Tertiary EFL Students. *EDULANGUE*, *6*(2), 150–166.

Lee & Oxford. (1989). Strategies for learning a second or foreign language: Published online by Cambridge University Press: 22 February 2011.

Naiman, N., Fröhlich, M., Stern, H. H., & Todesco, A. (1978). *The good language learner*. Ontario Institute for Studies in Education (OISE).

Ni, Q., Chatupote, M., & Teo, A. (2008). A deep look into learning strategy uses by successful and unsuccessful students in the Chinese EFL learning context. RELC Journal, 39(3), 338-358.

O'Malley, J. M., & Chamot, A. U. (1990). Learning Strategies in Second Language Acquisition. New York: Cambridge University Press.

Oxford, R.L. (1996). Language learning strategies around the world: Cross-cultural perspectives. Second Language Teaching & Curriculum Center, University of Hawai'I, Honolulu, HI.

Piaget. (1972).*The facilitation of meaningful verbal learning in the classroom*: Pages 162-178 Published online: 01 Oct 2009

Peacock, Matthew and Belinad Ho. (2003). Student language learning strategies across eight disciplines. International Journal of Applied Linguistics, 13(2), 179-200.

Phillips, Victoria. (1990). English as a second language learner strategies of adult Asian students using the Strategy Inventory for Language Learning (Doctoral dissertation). University of San Francisco, CA.

Seven, M. A. (2020). Motivation in Language Learning and Teaching. *African Educational Research Journal*, 8, 62-71

Souksomboun. (2017-2018). *ການປະເມີນຫຼັກສູດປະລິນຍາຕີ ສາຂາພາສາອັງກິດນຳໃຊ້*, ຄະນະພາສາ ແລະ ມະນຸດສາດ, ມະຫາວິທະຍາໄລສະຫວັນນະເຂດ.

Sulhair, B. (2025). An Analysis of Students' Anxiety and Self-Confidence in English Speaking Class. *Journal of Language and Learning Research*, *2*(1), 10–25.

VATHANAVONG et al. (2021). The Students' Attitudes towards English Language Learning English Pedagogy Students, Faculty of Education, Souphanouvong University. *Journal of Multidisciplinary Research and Development*, 7(2) ,124-133.

Viet, V. V. (2017). Undergraduate students' behavior towards learning English: A case study at Nong Lam University. VNU

Watcharajinda, D. (2009). *Factors affecting English language learning achievement among Thai university students* [Master's thesis, Chulalongkorn University]. Bangkok, Thailand.

Wenden, A. L. (1987). Conceptual Background and Utility. In A. L. Wenden, & J. Rubin (Eds.), *Learner Strategies in Language Learning* (pp. 3–13). Prentice-Hall.

Wenden. (1991). *Attitude and motivation in second language learning: the role of Attitude and motivation*, London: Edward Anold.

Wu, S. H. (2008). *A study of the relationship between English learning strategies and English proficiency of university students in Taiwan* [Master's thesis, National Cheng Kung University]. Tainan, Taiwan.